ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ** ເລກທີ 77 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 02 ມິຖຸນາ 2023

ກະຊວງ ກະສິກຳ-ປ່າໄມ້
ເລກທີ 2077
ວັນທີ 08.6.23
ເວລາ.......

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຄວາມຮັບຜິດຊອບວຽກງານການກຳນົດຕຳແໜ່ງງານ ໃຫ້ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໂດຍກົງ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດ ວ່າດ້ວຍການກຳນົດຕຳແໜ່ງງານ ສະບັບເລກທີ 734/ລບ, ລົງວັນທີ 31 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 69/ພນ, ລົງວັນທີ 12 ພຶດສະພາ 2023.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ເຫັນດີມອບໃຫ້ກະຊວງພາຍໃນ ຮັບຜິດຊອບການກວດຜ່ານ ແລະ ພິຈາລະນາຮັບຮອງການກຳນົດຕຳແໜ່ງງານຂອງບັນດາກະຊວງ-ອົງການຂັ້ນສູນກາງ, ພ້ອມທັງປະຕິບັດບົດບາດການຄຸ້ມຄອງມະຫາພາກ ດັ່ງນີ້:

1. ຄົ້ນຄວ້າຫັນແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາເປັນຍຸດທະສາດ, ນິຕິກຳ ແລະ ແຜນປະຕິບັດງານການກຳນົດຕຳແໜ່ງງານ ແຕ່ລະໄລຍະ;
2. ຄົ້ນຄວ້າສ້າງ, ປັບປຸງ ແລະ ໂຄສະນາເຜີຍແຜ່ນິຕິກຳ, ຄູ່ມື ແລະ ເອກະສານທີ່ກ່ຽວຂ້ອງ ກ່ຽວກັບການກຳນົດຕຳແໜ່ງງານ ໃຫ້ບັນດາກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
3. ສົມທົບກັບພາກສ່ວນກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ດຳເນີນການຝຶກອົບຮົມການຂຽນຕຳແໜ່ງງານໃຫ້ລັດຖະກອນ ຜູ້ທີ່ຮັບຜິດຊອບວຽກງານດັ່ງກ່າວ;
4. ຊຸກຍູ້, ຕິດຕາມ, ກວດກາ, ສັງລວມ, ຢັ້ງຢືນການກວດຜ່ານ ແລະ ການຮັບຮອງການກຳນົດຕຳແໜ່ງງານບັນດາກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ, ສັງລວມ-ລາຍງານຜົນການກຳນົດຕຳແໜ່ງງານ ຕໍ່ລັດຖະບານ ຕາມລະບຽບການ.

**ມາດຕາ 2** ມອບໃຫ້ບັນດາກະຊວງ-ອົງການຂັ້ນສູນກາງ ຮັບຜິດຊອບສັງລວມ ແລະ ຢັ້ງຢືນການກຳນົດຕຳແໜ່ງງານຂອງພາກສ່ວນຕົນ ແລ້ວສະເໜີກະຊວງພາຍໃນ ກວດຜ່ານ ແລະ ອອກຂໍ້ຕົກລົງ ຮັບຮອງເອົາການກຳນົດຕຳແໜ່ງງານຕາມລະບຽບການ. ຈາກນັ້ນ, ລັດຖະມົນຕີ-ຫົວໜ້າອົງການ ລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານຂັ້ນຫົວໜ້າ, ຮອງຫົວໜ້າກົມ ແລະ ຫົວໜ້າກົມ ຫຼື ທຽບເທົ່າ ລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານຂັ້ນພະແນກ ລົງຮອດວິຊາການ ຂອງອົງການຈັດຕັ້ງຕົນ. ພ້ອມທັງ ດຳເນີນການຊຸກຍູ້, ຕິດຕາມ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ຂອງຂະແໜງການຕົນຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ສຳເລັດ.

**ມາດຕາ 3** ມອບໃຫ້ອົງການປົກຄອງແຂວງ, ນະຄອນຫຼວງວຽງຈັນ ຮັບຜິດຊອບການກວດຜ່ານ ແລະ ພິຈາລະນາຮັບຮອງການກໍານົດຕໍາແໜ່ງງານຂອງພະແນກການ-ອົງການອ້ອມຂ້າງແຂວງ, ນະຄອນຫຼວງວຽງຈັນ ແລະ ບັນດາຫ້ອງການ-ອົງການອ້ອມຂ້າງເມືອງຂອງຕົນ ບົນພື້ນຖານຕາມການຢັ້ງຢືນ ແລະ ການສະເໜີຂອງພະແນກພາຍໃນແຂວງ, ນະຄອນຫຼວງວຽງຈັນ. ຈາກນັ້ນ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ລົງລາຍເຊັນໃບຢັ້ງຢືນການກໍານົດຕໍາແໜ່ງງານຂັ້ນຫົວໜ້າ, ຮອງຫົວໜ້າພະແນກການ-ອົງການອ້ອມຂ້າງແຂວງ, ນະຄອນຫຼວງວຽງຈັນ; ຫົວໜ້າພະແນກການ-ອົງການອ້ອມຂ້າງແຂວງ, ນະຄອນຫຼວງວຽງຈັນ ລົງລາຍເຊັນໃບຢັ້ງຢືນການກໍານົດຕໍາແໜ່ງງານຂັ້ນຫົວໜ້າຂະແໜງການ ລົງຮອດວິຊາການ.

ເຈົ້າເມືອງ, ເຈົ້ານະຄອນ ລົງລາຍເຊັນໃບຢັ້ງຢືນການກໍານົດຕໍາແໜ່ງງານຂັ້ນຫົວໜ້າ, ຮອງຫົວໜ້າຫ້ອງການ-ອົງການຂັ້ນເມືອງ; ຫົວໜ້າຫ້ອງການ-ອົງການຂັ້ນເມືອງ ລົງລາຍເຊັນໃບຢັ້ງຢືນການກໍານົດຕໍາແໜ່ງງານຂັ້ນຫົວໜ້າໜ່ວຍງານ ລົງຮອດວິຊາການ.

ສໍາລັບບັນດາພະແນກ-ອົງການອ້ອມຂ້າງແຂວງ, ນະຄອນຫຼວງວຽງຈັນ ແລະ ບັນດາຫ້ອງການ-ອົງການອ້ອມຂ້າງເມືອງ ທີ່ກະຊວງພາຍໃນໄດ້ຮັບຮອງແລ້ວ ແມ່ນໃຫ້ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້. ສ່ວນພາກສ່ວນທີ່ໄດ້ສະເໜີ ຫາ ກະຊວງພາຍໃນ ກ່ອນແລ້ວ ແມ່ນໃຫ້ກະຊວງພາຍໃນ ສືບຕໍ່ພິຈາລະນາຮັບຮອງໃຫ້ສໍາເລັດ.

**ມາດຕາ 4** ບັນດາກະຊວງ-ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ສັງລວມ ແລະ ລາຍງານຜົນການກໍານົດຕໍາແໜ່ງງານ ໃຫ້ກະຊວງພາຍໃນ ຮັບຊາບ. ຈາກນັ້ນ, ກະຊວງພາຍໃນ ສັງລວມ, ລາຍງານ ແລະ ສະເໜີຂໍທິດຊີ້ນໍາ ຈາກລັດຖະບານ ເປັນແຕ່ລະໄລຍະ.

**ມາດຕາ 5** ບັນດາກະຊວງ-ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ, ຖ້າຫາກການຈັດຕັ້ງປະຕິບັດພົບຄວາມຫຍຸ້ງຍາກ, ບໍ່ໂລ່ງລ່ຽນ ໃຫ້ປະສານສົມທົບກັບ ກະຊວງພາຍໃນ ແລະ ຂັ້ນເທິງຂອງຕົນ ເພື່ອຮ່ວມກັນພິຈາລະນາ ແກ້ໄຂຕາມຄວາມເໝາະສົມ.

**ມາດຕາ 6** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນາຍົກລັດຖະມົນຕີ

**ທອງລຸນ ສີສຸລິດ**